# ດານຽນ ຜູ້ແກ້ໄຂຄວາມຝັນ

ໃຈຄວາມສຳຄັນ ອານາຈັກ

ຂໍ້ຄວາມສຳຄັນ ໒:໔໔ ແລະ ໗:໑໓-໑໔

ຈຳນວນບົດ ໑໒ ບົດ

ເຣື່ອງເກີດຂຶ້ນແຕ່ປີ ໖໐໖ ຈົນເຖິງປີ ໕໓໔ ກ່ອນ ຄ.ສ.

ເຣື່ອງເກີດຂຶ້ນທີ່ ບາບີໂລນ

ຈັກກະພັດທີ່ມີອຳນາດ ບາບີໂລນ ແລ້ວແມດກັບເປເຣເຊ

ດານຽນແປວ່າ ພຣະເຈົ້າເປັນຜູ້ຕັດສິນ

ເປັນຜູ້ທຳນວາຍຄົນທີ ໑໒

ເປັນສະໄໝດຽວກັນກັບ ເຢເຣມີ, ເອເຊກຽນ ຫາບາກຸກ

## ໑. ຄຳນຳ

ດານຽນເປັນຜູ້ທຳນວາຍພິເສດ ແລະຕ່າງຈາກວິທີການຂອງຜູ້ທຳນວາຍອື່ນໆ ດານຽນເປັນຜູ້ຊຳນານແລະມີລັກສນະເປັນຄົນບໍຣິສຸດ ເຖິງແມ່ນວ່າເພິ່ນເປັນຂ້າຣາຊການທີ່ມີຕຳແໜ່ງສູງແລະຢູ່ໃກ້ຄຽງເຈົ້າແຜ່ນດິນກໍດີ ເພິ່ນກໍເປັນຄົນທີ່ພົ້ນອ່ອນນອມ ຄຳທຳນວາຍຂອງເພິ່ນສ່ວນຫລາຍກ່ຽວກັບຊາວຕ່າງປະເທດ ຕົ້ນສບັບເດີມຂອງໜັງສືນີ້ໄດ້ຂຽນໄວ້ເປັນສອງພາສາຄື ພາສາເຮັບເຣີແລະພາສາອາຣາເມເອນ

## ໒. ວ່າດ້ວຍຄາວຂອງດານຽນ

ດານຽນ ເປັນຂ້າຣາຊການ ຊັ້ນສູງ ໂດຍຢູ່ ໃຕ້ການ ຄວບຄຸມຂອງ ກະສັດສີ່ອົງຄື

### ໑. ກະສັດເນບຶກາດເນຊາເຣ

ໃນຄາວຂອງກະສັດອົງນີ້ ດານຽນໄດ້ຮັບຕຳແໜ່ງ ເປັນຜູ້ປົກຄອງແຂວງບາບີໂລນ (ບົດທີ ໒)

### ໒. ກະສັດເບນຊາດຊາເຣ

ກະສັດ ອົງ ນີ້ ເປັນ ຫລານ ຂອງ ກະສັດ ເນບຶ ກາດ ເນ ຊາ ເຣ (໕:໑໑) ຕາມປວັດສາດຂອງຊາວບາບີໂລນວ່າ ພາຍຫລັງກະສັດເນບຶກາດເນຊາເຣນັ້ນ ໄດ້ມີກະສັດສີ່ອົງ ປົກຄອງຕໍ່ມາ ສ່ວນກະສັດ ເບນຊາດຊາເຣເປັນພຽງຜູ້ລອງກະສັດແລະດາ-ນຽນເອງໄດ້ເປັນຜູ້ລອງກະສັດເບນຊາດຊາເຣ (໕:໒໙)

### ໓. ກະສັດດາຣິອຶເຊ

ໃນບົດທີ ໕ ເຮົາເຫັນດານຽນແປຄວາມໝາຍຄຳທີ່ຂຽນໃສ່ຝາພຣະຣາຊວັງ ແລ້ວໃນຄ່ຳຄືນນັ້ນເບນຊາດຊາເຣ ກະສັດຂອງຊາວການເດກໍຖືກຂ້າຕາຍ ກະສັດດາຣິອຶເຊຂອງຊາວແມດກໍຍຶດເອົາອານາຈັກນັ້ນ (໕:໓໐–໓໑) ໂດຍໄດ້ແຕ່ງຕັ້ງຜູ້ປົກຄອງຂຶ້ນສາມຄົນ ຄົນນຶ່ງຄືດານຽນເອງຊຶ່ງໄດ້ເປັນຄົນສຳຄັນແລະດີກວ່າສອງຄົນນັ້ນ (໖:໑–໓)

### ໔. ກະສັດຊີຣີເຊ

ໃນບົດທີ ໖:໒໘ ກະສັດຊີຣີເຊໄດ້ປົກຄອງໃນປີ ໔໓໘–໔໒໙ ກ່ອນ ຄ.ສ. ໃນຄາວຂອງກະສັດອົງນີ້ ດານຽນໄດ້ເຫັນຊາວຢູດາກຸ່ມນຶ່ງກັບຄືນກຸງເຢຣູຊາເລັມ, ຕາມໜັງສືເອເຊດຣາເຊບົດ ໑ ວ່າ ກະສັດຊີຣີເຊໄດ້ສັ່ງໃຫ້ຊາວຢູດາກັບຄືນກຸງເຢຣູຊາເລັມເມື່ອປີ ໔໓໔ ແຕ່ດານຽນບໍ່ໄດ້ກັບຄືນພ້ອມກັບຄົນເຫລົ່ານີ້

## ໓. ວ່າດ້ວຍຊີວິວປະວັດຂອງດານຽນ

ເມື່ອດານຽນໄດ້ຖືກກວາດຕ້ອນໄປເມືອງບາບີໂລນໃນປີ ໖໐໕ ນັ້ນ ເພິ່ນມີອາຍຸປະມານ ໑໘ ຫລື ໒໐ ປີ ເພິ່ນເປັນລູກຂອງເຈົ້ານາຍຄົນນຶ່ງ ຄຳວ່າ "ດານຽນ" ແປວ່າ "ພຣະເຈົ້າເປັນຜູ້ຕັດສິນ" ເພິ່ນເປັນຄົນຮູບງາມແລະມີປັນຍາຫລາຍ ເປັນຄົນສັດຊື່ຕໍ່ພຣະພັກພຣະເຈົ້າແລະຕໍ່ຄົນທັງປວງທີ່ສຸດ ເພິ່ນເປັນຄົນຊຳນິຊຳນານແລະຂະຍັນໝັ່ນພຽນໃນການອ້ອນວອນ (ເອເຊກຽນ ໑໔:໑໔-໒໐) ເພິ່ນມີຊື່ສຽງໃນທາງມີປັນຍາ ເປັນຄົນທີ່ໄດ້ເຫັນນິມິດຫລາຍເທື່ອແລະມີອາຍຸຍືນນານເຖິງ ໙໐ ປີ

### ລັກສນະນິໄສແລະຄວາມຊຳນານຂອງດານຽນ

໑. ເປັນຄົນຕັ້ງໝັ້ນຢູ່ໃນຄວາມສັດຊື່ ບົດທີ ໑

໒. ຂຍັນໝັ່ນພຽນໃນການອ້ອນວອນ ບົດ ໖:໑໐; ໙:໑-໑໓

໓. ເປັນຄົນບໍ່ຖືຕົວ ບົດ ໒:໒໘–໓໐

໔. ເປັນຄົນມີຄວາມເຊື່ອຫລາຍ ບົດ ໒:໑໓-໒໘

໕. ເປັນຄົນມີປັນຍາຄວາມຮູ້ ບົດ ໑:໑໗–໒໐

໖. ເປັນຄົນມີໃຈກ້າຫານ ບົດ ໔:໑໖–໒໕

## ໔. ວ່າດ້ວຍເນື້ອຄວາມ

ໃຈຄວາມຂອງຄຳສອນໃນໜັງສືດານຽນມີຢູ່ສີ່ປະການຄື

໑. ຄວາມເຊື່ອມີໄຊຊະນະຕໍ່ການນັບຮູບ

໒. ຄວາມສັດຊື່ມີໄຊຊະນະຕໍ່ການນັບຮູບ

໓. ຄວາມປັນຍາຄວາມຮູ້ມີໄຊຊະນະຕໍ່ເວດມົນຄາຖາ

໔. ອຳນາດພຣະວິນຍານມີໄຊຊະນະຕໍ່ອຳນາດການປົກຄອງ

ອັນນຶ່ງໜັງສືດານຽນແບ່ງເປັນສອງພາກຄື ພາກທີ ໑ ວ່າດ້ວຍປວັດ ແລະພາກທີສອງວ່າດ້ວຍຄຳທຳນວາຍ ໃນພາກປວັດສາດໄດ້ສແດງໃຫ້ເຫັນການປະພຶດ ໃນອານາຈັກທັງຫລາຍຊຶ່ງບໍ່ນັບຖືພຣະເຈົ້າ ແລະການປະພຶດໃນອານາຈັກຂອງພຣະເຈົ້າຊຶ່ງຕັ້ງຢູ່ເປັນນິດ

## ໕. ວ່າດ້ວຍນິມິດຂອງດານຽນ

໑. ນິມິດສັດຮ້າຍສີ່ຕົວ ບົດ ໗ ນິມິດນີ້ກ່ຽວກັບຮູບຄົນໃຫຍ່ໃນບົດທີ ໒ ຊຶ່ງສແດງເຖິງອານາຈັກໃຫຍ່ທີ່ມີກະສັດປົກຄອງພວກຢູດາ ນິມິດສັດສີ່ໂຕນີ້ໄດ້ແກ່ອານາຈັກທັງສີ່ອານາຈັກ ເຫລົ່ານີ້ ປຽບກັບຮູບຄົນໃຫຍ່ທີ່ເຮັດດ້ວຍເງິນຄຳ, ເຫລັກ, ທອງ, ແລະດິນຊຶ່ງເປັນໄປຕາມຄວາມຄິດຄວາມເຫັນຂອງມະນຸດຜູ້ເຫັນພຽງພາຍນອກ ພວກຄຣູສອນສ່ວນຫລາຍເຄີຍແປແລະປຽບນິມິດເຫລົ່ານີ້ດັ່ງນີ້

ບົດ ໒ ບົດ ໗ ຄວາມປຽບ

໑. ຫົວເປັນຄຳ ຄື ສິງ ປຽບເຖິງຣາຊອານາຈັກ ບາບີໂລນ

໒. ອົກເປັນເງິນ ຄື ໝີ ,, ແມດກັບເປເຣເຊ

໓. ທ້ອງເປັນທອງ ຄື ເສືອດາວ ,, ເຣເລັນ

໔. ແຂ່ງເປັນເຫລັກ ຄື ຄວາມມິລຶກໜ້າກົວ ,, ໂລມ

໕. ຫີນ ,, ພຣະເຢຊູຄຣິດຜູ້ ຈະໄຊຊນະຕໍ່ອານາຈັກທັງຫລາຍ

໒. ນິມິດຂອງແກະເຖິກໃນບົດ ໘ : ແກະເຖິກປຽບເຖິງອານາຈັກ ບາບີໂລນ ແລະແບ້ ເຖິກປຽບ ເຖິງອານາຈັກແມດກັບເປເຣເຊ (໘:໒໐) ເຣື່ອງໃນຂໍ້ ໒໓–໒໔ ໝາຍເຖິງ ອັນຕຽວກົດ ເອບີຟານ Antiochus Epiphanes ຄືຜູ້ຊົ່ວຮ້າຍທີ່ສຸດ ເຂົາໄດ້ຂົ່ມເຫັງພວກຢູດາ ເຂົາເປັນສັນຍາລັກສນະຄື "ຄົນຊົ່ວຮ້າຍ" ຊຶ່ງຈະປາກົດອອກມາໃນຄວາມສຸດທ້າຍຂອງໂລກນີ້ (໒ ເທຊະໂລນິກ ໒:໓-໔)

໓. ນິມິດ ໗໐ ອາທິດໃນບົດທີ ໙ : ໃນພາສາເຮັບເຣີ ມີຄຳວ່າອາທິດມີແຕ່ເລກ ໗໐ ຊຶ່ງໝາຍຄວາມວ່າ ໗໙໐ ປີ ແລະຖ້າເຮົານັບແຕ່ປີທີ່ສັ່ງໃຫ້ກໍ່ສ້າງກຸງເຢຣູຊາເລັມໃໝ່ເຖິງປີທີ່ພຣະເຢຊູຊົງລົມພຣະຊົນເທິງໄມ້ກາງແຂນແລ້ວ ກໍມີ ຈຳນວນ ໗໙ ອາທິດ ຫລື ໔໘໓ ປີ

໔. ຄຳທຳນວາຍໃນບົດທີ ໑໐-໑໒: ໃນບົດທີ ໑໐ ມີເລື່ອງນິມິດທີ່ຖືເປັນຄຳນຳໃນບົດທີ ໑໑ ເປັນໃຈຄວາມຂອງຄຳທຳນວາຍທີ່ກ່ຽວກັບຄາວສຸດທ້າຍຂອງໂລກ ແລະໃນບົດທີ ໑໒ ເປັນຄຳທຳນວາຍເລື່ອງພຣະເຈົ້າໄຊຊນະ

ຂ. ວ່າດ້ວຍຄວາມໝາຍຕ່າງໆ

໑. ຮູບຄົນໃນບົດ ໒ ປຽບເຖິງອານາຈັກທັງຫລາຍໃນໂລກທີ່ສືບຕໍ່ກັນມາແລະສູນເສັຽໄປ

໒. ກ້ອນຫີນທີ່ໄດ້ຫລົບລົງໃນບົດ ໒:໓໔-໓໕ ປຽບເຖິງອານາຈັກຂອງພຣະຄຣິດທີ່ຈະເຣີ່ມຊ້າໆ ແຕ່ໄດ້ທຳລາຍອານາຈັກທັງຫລາຍແລະຈະຕັ້ງຢູ່ເປັນນິດ

໓. ບຸດມະນຸດໃນບົດທີ ໗:໑໓-໑໔ ປຽບເຖິງພຣະເຢຊູເອງຄືພຣະອົງໄດ້ຍອມຖືຕົວເປັນມະນຸດ (ມັດທາຍ ໑໖:໑໓; ໒໖:໖໔)

ຄ. ວ່າດ້ວຍການແບ່ງເປັນພາກ

ພາກທີ ໑ ວ່າດ້ວຍເລື່ອງພົງສາວະດານ ບົດ ໑-໖

ກ. ເລື່ອງກະສັດເນບູກາດເນຊາເຣ ໄດ້ສເວີຍຣາດ ບົດ ໑-໔

ບົດທີ ໑ ການຕັ້ງໃຈໃໝ່ຂອງດານຽນ

ບົດທີ ໒ ຄວາມຝັນເຖິງຮູບຄົນໃຫຍ່

ບົດທີ ໓ ເຕົາໄຟອັນຮ້ອນກ້າ

ບົດທີ ໔ ຄວາມຝັ່ນເຖິງຕົ້ນໄມ້

ຂ. ເມື່ອ ກະສັດເບນຊາດ ຊາເຣ ໄດ້ ສເວີຍຣາດ ບົດທີ ໕

ການກິນລ້ຽງຄັ້ງໃຫຍ່ຂອງເບນຊາດຊາເຣ

ຄ. ເມື່ອກະສັດດາຣີອີເຊໄດ້ສເວີຍຣາດ ບົດທີ ໖

ດານຽນຢູ່ໃນຂຸມສິງ

ພາກທີ ໒ ວ່າດ້ວຍການທຳນວາຍ ບົດທີ ໗–໑໔

ບົດທີ ໗ ນິມິດສັດຮ້າຍທັງສີ່ໂຕ

ບົດທີ ໘ ນິມິດແພະກັບແບ້ເຖິກ

ບົດທີ ໙ ຄວາມອ້ອນວອນຂອງດານຽນກັບນິມິດ ແຫ່ງ ໗໐ ອາທິດ

ບົດທີ ໑໐-໑໔ ຄຳປາກົດກ່ຽວກັບການຍາກລຳບາກທີ່ຈະຕົກຖືກຊາວຢູດາ